# ສຶກສາ, ວິທະຍາສາດ ແລະ ກິລາ
Education, Science and Sports Daily News

ສຳນັກງານຕັ້ງຢູ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການ ແລະ ກິລາ ເຂດຊຽງຍືນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ
ໂທ/ແຟັກ: 021 213161, 021 254277, 030 2800600 Email: khaokila@hotmail.com

ວັນພະຫັດ
14 ກັນຍາ 2023
ປີທີ 23, ສະບັບທີ 4.980
ແຮມ 14 ຄ່ຳ ເດືອນ 9
ພສ 2566


ຈັນຍາບັນຂອງຄູລາວ
- ຊື່ສັດບໍລິສຸດ
- ຮັກອາຊີບ
- ຮັກແພງຜູ້ຮຽນ
- ເປັນແບບຢ່າງນຳໜ້າ
- ພັດທະນາຕົນເອງ

# 2 ປີເຄິ່ງ ແຂວງວຽງຈັນ ຍັງບໍ່ບັນລຸ 9 ຄາດໝາຍ ໃນຂະແໜງການສຶກສາ




● 2 ປີເຄິ່ງຜ່ານມາ, ໄປພ້ອມກັບການພັດທະນາຂະແໜງການອື່ນໆແລ້ວ ແຂວງວຽງຈັນ ຍັງສຸມໃສ່ປະຕິບັດຄາດໝາຍວັດທະນະທຳ-ສັງຄົມ ໂດຍສາມາດບັນລຸ 6 ຄາດໝາຍ ແລະ ບໍ່ບັນລຸ 9 ຄາດໝາຍ ໃນທັງໝົດ 15 ຄາດໝາຍຂອງວຽກງານສຶກສາຕາມແຜນທີ່ສະພາປະຊາຊົນແຂວງຮັບຮອງ.

ທ່ານ ດາວເຮືອງ ນັນທາວົງ ຮອງເຈົ້າແຂວງວຽງຈັນ ໄດ້ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຂວງວຽງຈັນ ໄລຍະກາງສະໄໝ ແລະ ທິດທາງຈຸດສຸມ 2 ປີເຄິ່ງ ທ້າຍສະໄໝ ຄັ້ງທີ VI (2021-2025) ກ່ຽວກັບວຽກງານວັດທະນະທຳ-ສັງຄົມ ເມື່ອບໍ່ດົນມານີ້ ວ່າ: ໄດ້ສຸມໃສ່ການຈັດຕັ້ງປະຕິບັດ 15 ຄາດໝາຍຂອງວຽກງານສຶກສາ...

ອ່ານຕໍ່ໜ້າ 2

# ແຂວງຫຼວງນ້ຳທາ ຕີລາຄາຄົນວຽກງານ ຜູ້ບໍລິຫານການສຶກສາ ແລະ ກິລາ ສົກ 2022-2023

● ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງນ້ຳທາ ໄດ້ຈັດກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2022-2023 ໃນວັນທີ 14 ກັນຍາ ຜ່ານມາ ທີ່ສະໂມສອນໂຮງຮຽນ ມສ ກົມນອນຊົນເຜົ່າແຂວງ ໂດຍການເປັນປະທານຂອງທ່ານ ບຸນໂຮມ ຈິດດາລາ ກຳມະການພັກແຂວງ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ເປັນກຽດເຂົ້າຮ່ວມຂອງທ່ານ ອ່ອນຈັນ ຄຳພາວົງ ກຳມະການປະຈຳພັກແຂວງ ຮອງເຈົ້າແຂວງ ຜູ້ຊີ້ນຳຂົງເຂດເສດຖະກິດ, ພ້ອມດ້ວຍເລຂາທິການສະພາປະຊາຊົນແຂວງ, ບັນດາເຈົ້າເມືອງ-...

ອ່ານຕໍ່ໜ້າ 2




# ສະຫວັນນະເຂດ ສຳເລັດການແຂ່ງຂັນດອກປີກໄກ່ ຕ້ອນຮັບວັນສຳຄັນຕ່າງໆຂອງຊາດ




● ແຂວງສະຫວັນນະເຂດ ໄດ້ສຳເລັດການຈັດການແຂ່ງຂັນກິລາດອກປີກໄກ່ ເພື່ອສ້າງຂະບວນການຮັບຕ້ອນວັນສຳຄັນຕ່າງໆຂອງຊາດ ເມື່ອບໍ່ດົນມານີ້ ທີ່ສະໂມສອນດອກປີກໄກ່ແຂວງ ໂດຍການເປັນປະທານຂອງທ່ານ ສົມຈິດ ລາດຊະວົງ ປະທານສະຫະພັນກິລາດອກປີກໄກ່ແຂວງສະຫວັນນະເຂດ, ມີທ່ານ ເພັດອຸດອນ ບົວປະເສີດ ຮອງປະທານສະຫະພັນກິລາດອກປີກໄກ່ແຂວງຄຳມ່ວນ ພ້ອມດ້ວຍຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ນັກກິລາຮຸ່ນອາວຸໂສ, ຊາວໜຸ່ມ, ນັກສຶກສາ ແລະ ຄະນະສະຫະພັນດອກປີກໄກ່-ນັກກິລາທີ່ມາຈາກແຂວງຄຳມ່ວນເຂົ້າຮ່ວມຢ່າງພ້ອມພຽງ.

ອ່ານຕໍ່ໜ້າ 5

# ຄຳມ່ວນ ເປັນເຈົ້າພາບຈັດງານແຂ່ງຂັນ ຮ້ອງເພງ-ຂັບລຳສຽງດີ ທົ່ວກອງທັບ ຄັ້ງທີ IV ເຂດ 3

● ງານແຂ່ງຂັນຮ້ອງເພງ-ຂັບລຳສຽງດີ ທົ່ວກອງທັບ ຄັ້ງທີ IV ເຂດ 3 ໄດ້ເປີດຂຶ້ນໃນວັນທີ 13 ກັນຍາ ແລະ ຈະໄດ້ດຳເນີນໄປຮອດວັນທີ 15 ກັນຍາ 2023 ທີ່ສະໂມສອນແຂວງຄຳມ່ວນ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20 ມັງກອນ ປີ 1949-20 ມັງກອນ 2024) ໂດຍມີ ທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງຄຳມ່ວນ ແລະ ທ່ານ ພົວ ພູມີ ດາລາເພັດ ຮອງຫົວໜ້າກົມໃຫຍ່ການເມືອງກອງທັບກະຊວງປ້ອງກັນປະເທດ ພ້ອມດ້ວຍບັນດາການນຳຂັ້ນແຂວງ, ຄະນະພັກ, ຄະນະບັນຊາກອງບັນຊາການທະຫານແຂວງ, ບັນດາຄະນະຊີ້ນຳ, ຄະນະນຳພາ, ນັກຮ້ອງ-ຂັບລຳສຽງດີ, ນາຍ ແລະ ພົນທະຫານ, ພະນັກງານ-ລັດຖະກອນ ແລະ ມວນຊົນຊາວແຂວງຄຳມ່ວນເຂົ້າຮ່ວມ.

ໃນພິທີ, ທ່ານ ພົວ ສົມແຄນ ອັບປະສອນ ຫົວໜ້າການເມືອງ ກອງບັນຊາການທະຫານແຂວງຄຳມ່ວນ ໄດ້ຜ່ານຂໍ້ຕົກລົງ ວ່າດ້ວຍການມອບໝາຍໃຫ້ບັນດາກົມກອງເປັນເຈົ້າພາບຈັດງານແຂ່ງຂັນຮ້ອງເພງ-ຂັບລຳສຽງດີ ໃນທົ່ວກອງທັບ ຄັ້ງທີ IV ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ ຊຶ່ງກະຊວງປ້ອງກັນປະເທດໄດ້ຕົກລົງໃຫ້ກອງບັນຊາການທະຫານແຂວງອຸດົມໄຊ ເປັນເຈົ້າພາບຈັດງານແຂ່ງຂັນເຂດທີ 1, ກອງບັນຊາການທະຫານແຂວງຊຽງຂວາງ...

ອ່ານຕໍ່ໜ້າ 5



ສຶກສາ, ວິທະຍາສາດ ແລະ ກິລາ
Education, Science and Sports Daily News



## 2 ປີເຄິ່ງ...

ຕໍ່ຈາກໜ້າ 1 ......

...ຕາມແຜນທີ່ສະພາປະຊາຊົນແຂວງຮັບຮອງໃນ 2 ປີເຄິ່ງ ບັນລຸ 6 ຄາດໝາຍ ແລະ ບໍ່ບັນລຸ 9 ຄາດໝາຍ. ໃນນີ້, 9 ຄາດໝາຍທີ່ຍັງບໍ່ບັນລຸ ປະກອບມີ ອັດຕາເຂົ້າຮຽນໃໝ່ລວມ ປ.5 ປະຕິບັດໄດ້ 98,7% (ຄາດໝາຍໃຫ້ໄດ້ 99,2%), ອັດຕາເຂົ້າຮຽນສຸດທິຊັ້ນປະຖົມປະຕິບັດໄດ້ 99,1% (ຄາດໝາຍໃຫ້ໄດ້ 99,7%), ອັດຕາປະລະການຮຽນຂອງນັກຮຽນ ປ.1 ປະຕິບັດໄດ້ 5,9% (ຄາດໝາຍໃຫ້ຍັງເຫຼືອ 5%), ອັດຕາເລື່ອນຊັ້ນ-ຈົບຊັ້ນປະຖົມປະຕິບັດໄດ້ 95% (ຄາດໝາຍ 96%), ອັດຕາເລື່ອນ ປ.5 ຂຶ້ນ ມ.1 ທຽບໃສ່ນັກຮຽນຕົ້ນປີ ປ.5 ປະຕິບັດໄດ້ 92,8% (ຄາດໝາຍ 98%), ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມປະຕິບັດໄດ້ 4% (ຄາດໝາຍໃຫ້ຍັງເຫຼືອ 3%), ອັດຕາເຂົ້າຮຽນໃໝ່ລວມ ມ.4 ປະຕິບັດໄດ້ 71,2% (ຄາດໝາຍໃຫ້ໄດ້ 75%), ອັດຕາປະລະການຮຽນຊັ້ນມັດທະຍົມຕອນຕົ້ນປະຕິບັດໄດ້ 9,4% (ຄາດໝາຍໃຫ້ຍັງເຫຼືອ 7%) ແລະ ອັດຕາຄ້າງຫ້ອງຊັ້ນປະຖົມປະຕິບັດໄດ້ 1,1% (ຄາດໝາຍໃຫ້ຍັງເຫຼືອ 1%) ຊຶ່ງສາເຫດທີ່ພາໃຫ້ບໍ່ບັນລຸຄາດໝາຍຂ້າງເທິງນີ້ ຍ້ອນໂຮງຮຽນເຂດຊົນນະບົດບາງແຫ່ງຍັງໄກຈາກບ້ານ, ຂາດຄູສອນປະສົບການ, ນັກຮຽນຈຳນວນໜຶ່ງທີ່ຮຽນຈົບປະຖົມ ຫຼື ມັດທະຍົມຕົ້ນແລ້ວ ບໍ່ສາມາດສືບຕໍ່ຮ່ຳຮຽນໄດ້ ເກີດມີການປະລະການຮຽນຍ້ອນສະພາບເສດຖະກິດຂອງຜູ້ປົກຄອງ ພໍ່ແມ່ເລືອກໃຫ້ລູກອອກໂຮງຮຽນເພື່ອຊ່ວຍຄອບຄົວຫາລາຍໄດ້.

ສຳລັບວຽກງານສາທາລະນະສຸກ ແຂວງໄດ້ປະເມີນຕີລາຄາຄືນໃນລະບົບ 5 ດີ 1 ພໍໃຈຂອງກະຊວງສາທາລະນະສຸກ ແລະ ໄດ້ສຸມໃສ່ການຈັດຕັ້ງປະຕິບັດ 11 ຄາດໝາຍຂອງວຽກງານສາທາລະນະສຸກ ຕາມແຜນທີ່ສະພາປະຊາຊົນແຂວງຮັບຮອງຮອດຕົ້ນປີ 2023 ນີ້ ເຫັນວ່າ ມີທ່າອ່ຽງບັນລຸ 9 ຄາດໝາຍ ແລະ ບໍ່ບັນລຸ 2 ຄາດໝາຍ. ສຳລັບ 2 ຄາດໝາຍທີ່ຍັງບໍ່ບັນລຸ ປະກອບມີ ການເກີດມີແພດຊ່ວຍປະຕິບັດໄດ້ 24% (ແຜນໃຫ້ໄດ້ 88,7%), ການສັກຢາ ແລະ ຢອດຢາກັນພະຍາດເດັກນ້ອຍລຸ່ມ 1 ປີ ປະຕິບັດໄດ້ 27% (ແຜນໃຫ້ໄດ້ 95%).

**ໂດຍ: ຕະວັນຍາມ**

## ແຂວງຫຼວງນໍ້າທາ...

ຕໍ່ຈາກໜ້າ 1 ......

... ຮອງເຈົ້າເມືອງ 5 ເມືອງ, ຄະນະພັດທະນາການສຶກສາຂັ້ນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ, ຄະນະພະແນກສຶກສາທິການ ແລະ ກິລາແຂວງ, ຫົວໜ້າກຳມາທິການສຶກສາສິງແຂວງ, ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ 5 ເມືອງ, ຜູ້ອຳນວຍການ-ຮອງຜູ້ອຳນວຍການໂຮງຮຽນພາກລັດ ແລະ ເອກະຊົນອ້ອມຂ້າງແຂວງ ຕະຫຼອດຮອດພາກສ່ວນທີ່ກ່ຽວຂ້ອງຢ່າງພ້ອມພຽງ.

ໃນກອງປະຊຸມ ໄດ້ຮັບຟັງບົດສະຫຼຸບຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2022-2023 ແລະ ແຜນການປະຈຳສົກຮຽນ 2023-2024 ເປັນຕົ້ນແມ່ນຜົນສຳເລັດການຈັດຕັ້ງປະຕິບັດ 12 ຄາດໝາຍ ສາມາດບັນລຸໄດ້ 9 ຄາດໝາຍ ຄື: ອັດຕາເຂົ້າຮຽນໃໝ່ ປ.1 ຄາດໝາຍແມ່ນ 95,5% ສາມາດປະຕິບັດໄດ້ 95,9%; ອັດຕາຈົບຊັ້ນປະຖົມ ຄາດໝາຍແມ່ນ 95,5% ສາມາດປະຕິບັດໄດ້ 95,6%; ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນ ປ.5 ຫາ ມ.1 ຄາດໝາຍແມ່ນ 0,97% ສາມາດປະຕິບັດໄດ້ 0,99%; ອັດຕາເຂົ້າຮຽນໃໝ່ລວມ ມ.4 ຄາດໝາຍແມ່ນ 71,5% ສາມາດປະຕິບັດໄດ້ 72,6%; ອັດຕາປະລະຂອງນັກຮຽນຊັ້ນປະຖົມ ຄາດໝາຍແມ່ນ 2,3% ສາມາດປະຕິບັດໄດ້ 1,8%; ອັດຕາເລືອນ ປ.5 ຂຶ້ນ ມ.1 ຄາດໝາຍແມ່ນ 86,5% ສາມາດປະຕິບັດໄດ້ 87,9%; ອັດຕາປະລະຂອງນັກຮຽນມັດທະຍົມຕົ້ນ ຄາດໝາຍແມ່ນ 9% ສາມາດປະຕິບັດໄດ້ 8,2%; ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນໄດ້ບຳລຸງການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ຄາດໝາຍແມ່ນ 936 ຄົນ ສາມາດປະຕິບັດໄດ້ 1.248 ຄົນ; ມວນຊົນຫຼິ້ນກິລາ ແລະ ອອກກຳລັງກາຍະບໍລິຫານເພື່ອສຸຂະພາບ ຄາດໝາຍແມ່ນ 19% ສາມາດປະຕິບັດໄດ້ 21,16%.

ຂະແໜງການຍ່ອຍຂອງຂະແໜງການສຶກສາ ແລະ ກິລາ ມີຜົນສຳເລັດ ຄື: ການສຶກສາກ່ອນໄວ, ການສຶກສາຊັ້ນປະຖົມ, ການສຶກສາຊັ້ນມັດທະຍົມຕອນຕົ້ນ, ການສຶກສາຊັ້ນມັດທະຍົມຕອນປາຍ, ການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ແລະ ວຽກງານກິລາ-ກາຍຍະກຳກໍໄດ້ມີຜົນສຳເລັດເປັນກ້າວໆ.

ພ້ອມກັນນີ້, ຍັງໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາກິລາ-ກາຍະກຳຂອງແຂວງ, ການອະນຸມັດສ້າງຕັ້ງ ແລະ ຄຸ້ມຄອງທຸລະກິດກິລາ-ກາຍະກຳປະເພດຕ່າງໆ, ລາຍງານສະພາບການຈັດການຮຽນການສອນວິຊາ ປກຊ-ປກສ ພ້ອມທັງໄດ້ປະກອບຄຳຄິດຄຳເຫັນຕໍ່ກັບສະພາບບັນຫານັກຮຽນປະລະການຮຽນ, ນັກຮຽນຮຽນຈົບ ມ.4, ມ.7 ບໍ່ຢາກຮຽນຕໍ່ວິຊາສະເພາະ, ການແກ້ໄຂບັນຫາຂາດແຄນຄູ ແລະ ການແກ້ໄຂບັນຫາການດຳເນີນທຸລະກິດກິລາ-ກາຍຍະກຳພາຍໃນແຂວງ.

ຕອນທ້າຍ, ທ່ານ ອ່ອນຈັນ ຄຳພາວົງ ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຊີ້ນຳນຳພາ ຂອງຜູ້ບໍລິຫານການສຶກສາ ແລະ ກິລາ ໃນໄລຍະໜຶ່ງສົກຮຽນຜ່ານມາ ທີ່ໄດ້ພ້ອມກັນຊີ້ນຳນຳພາ ພະນັກງານ-ລັດຖະກອນ, ຄູສອນໃນທົ່ວແຂວງ ຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ຂອງຕົນຢ່າງຕັ້ງໜ້າ ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ. ພ້ອມກັນນັ້ນ, ທ່ານຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ບັນຫາຕ່າງໆ ທີ່ປະກົດຂຶ້ນຕໍ່ຂະແໜງການສຶກສາ ແລະ ກິລາ ໂດຍສະເພາະແມ່ນ ການຂາດແຄນຄູ, ການປະລະການຮຽນ ໂດຍທ່ານໄດ້ເນັ້ນໜັກໃຫ້ຜູ້ບໍລິຫານການສຶກສາທຸກຂັ້ນ ຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຄູອາຈານ ຕະຫຼອດຮອດນັກຮຽນນັກສຶກສາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວິຊາສະເພາະຂອງຕົນຢ່າງຕັ້ງໜ້າ, ໃຫ້ເຫັນໄດ້ພະນັກງານ-ລັດຖະກອນດີເດັ່ນ, ຄູສອນດີ-ນັກຮຽນເກັ່ງ ເພື່ອເຮັດໃຫ້ວຽກງານການສຶກສາ ແລະ ກິລາມີການຫັນປ່ຽນໃໝ່ຢ່າງແຂງແຮງ, ຕັ້ງໜ້າ ແລະ ຮອບດ້ານ. ຂະນະດຽວກັນນີ້, ທ່ານຍັງ ຮຽກຮ້ອງມາຍັງຜູ້ບໍລິຫານການສຶກສາທຸກຂັ້ນ ຈົ່ງເຊີດຊູຄວາມເປັນແບບຢ່າງນຳໜ້າໃນທຸກດ້ານ, ພ້ອມກັນຈັດຕັ້ງປະຕິບັດ 5 ຫຼັກມູນຂອງການສຶກສາ, ປະຕິບັດບັນດາຄາດໝາຍສູ້ຊົນໃຫ້ສຳເລັດຜົນ.

**ໂດຍ: ທອງສຸດດວງໃຈ ອຸດົມສີລີ (ສກຂ ຫຼວງນ້ຳທາ)**



# ຄຳມ່ວນ ສະຫຼຸບການປະຕິບັດໂຄງການອາຫານທ່ຽງໃນໂຮງຮຽນໄລຍະ 6 ເດືອນຕົ້ນປີ ແລະ ແຜນວຽກ 6 ເດືອນທ້າຍປີ 2023

ແຂວງຄຳມ່ວນ ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດໂຄງການອາຫານທ່ຽງໃນໂຮງຮຽນໄລຍະ 6 ເດືອນຕົ້ນປີ ແລະ ແຜນວຽກ 6 ເດືອນທ້າຍປີ 2023 ເມື່ອວັນທີ 13 ກັນຍາ 2023 ທີ່ສູນໄອຊີທີໂຮງຮຽນ ມ.ປາຍທ່າແຂກ ໂດຍການເປັນປະທານຮ່ວມຂອງທ່ານ ບັນຕະໄຊ ອິນທະສອນ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ທ່ານ ນາງ ອີຣີຊາ ບູຊີ ໄບຊາ ຫົວໜ້າແຜນການດ້ານຄຸນນະພາບໂຄງການ ຈາກອົງການ CRS, ມີບັນດາທ່ານຮອງເຈົ້າເມືອງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງສະຫວັນນະເຂດ, ຜູ້ຈັດການໂຄງການ, ຕາງໜ້າກົມທີ່ກ່ຽວຂ້ອງຂອງກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກະຊວງການຕ່າງປະເທດ, ຕາງໜ້າພະແນກການທີ່ກ່ຽວຂ້ອງຢູ່ຂັ້ນແຂວງ, ຜູ້ປະສານງານໂຄງການຈາກຫ້ອງການສຶກສາທິການ ແລະ ກິລາເມືອງເປົ້າໝາຍ, ແຂກທີ່ຖືກເຊີນຕາງໜ້າຂະແໜງການສຶກສາ ແລະ ພະນັກງານໂຄງການອາຫານທ່ຽງໃນໂຮງຮຽນເຂົ້າຮ່ວມ.




ໃນກອງປະຊຸມ, ທ່ານ ບັນຕະໄຊ ອິນທະສອນ ແລະ ທ່ານ ນາງ ອີຣີຊາ ບູຊີ ໄບຊາ ກໍໄດ້ຜັດປ່ຽນກັນມີຄຳເຫັນວ່າ: ໂຄງການອາຫານທ່ຽງໃນໂຮງຮຽນແມ່ນນອນໃນແຜນງານ 5 ປີ (2021-2025), ປະກອບມີ 2 ແຂວງ ແລະ 5 ເມືອງເປົ້າໝາຍ. ໃນນັ້ນແຂວງຄຳມ່ວນມີ 4 ເມືອງ ຄືເມືອງມະຫາໄຊ, ຍົມມະລາດ, ບົວລະພາ ແລະ ເມືອງໄຊບົວທອງ. ສ່ວນແຂວງສະຫວັນນະເຂດ ມີ 1 ເມືອງ ຄືເມືອງຊົນນະບູລີ, ໂຄງການອາຫານໂລກ (WFP) ແລະ ອົງການບັນເທົາທຸກກາໂຕລິກ (CRS) ໄດ້ຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ (MOES) ເພື່ອເສີມສ້າງຄວາມເຂັ້ມແຂງ ແລະ ສົ່ງມອບໂຄງການອາຫານໃນໂຮງຮຽນໃຫ້ແກ່ລະບົບແຫ່ງຊາດ ທັງນີ້ກໍເພື່ອຮັບປະກັນຄວາມຍືນຍົງ ແລະ ມີຜົນຕໍ່ຄົນຮຸ່ນຫຼັງ, ອົງການບັນເທົາທຸກກາໂຕລິກ ແລະ ໂຄງການອາຫານໂລກເປັນຄູ່ຮ່ວມງານໃນໂຄງການອາຫານທ່ຽງໃນໂຮງຮຽນ 2021-2025 ໂດຍໄດ້ຮັບທຶນຈາກກະຊວງກະສິກຳສະຫະລັດອາເມຣິກາ ໂດຍຮ່ວມກັບກະຊວງສຶກສາທິການ ແລະ ກິລາ ໃນການຈັດຕັ້ງປະຕິບັດໃນວົງເງິນ 7,5 ລ້ານໂດລາສະຫະລັດ, ກວມເອົາ 249 ໂຮງຮຽນທີ່ນອນຢູ່ໃນ 5 ເມືອງເປົ້າໝາຍທີ່ຂຶ້ນກັບ 2 ແຂວງ, ຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດ ໂດຍກົງທີ່ຄາດຄະເນໄວ້ 24.000 ຄົນ.

ໂຄງການດັ່ງກ່າວ, ໄດ້ສະໜອງເຄື່ອງມືທາງດ້ານກິດຈະກຳເພື່ອສຸຂະພາບ ແລະ ໂພຊະນາການຂອງໂຮງຮຽນທີ່ຮອບດ້ານ, ລວມທັງອາຫານໃນໂຮງຮຽນ, ການເຂົ້າເຖິງນ້ຳໃຊ້ ແລະ ສຸຂາພິບານທີ່ສະອາດ ແລະ ປອດໄພ, ການສຶກສາຮຽນຮ່ວມ, ສົ່ງເສີມຄວາມເປັນເຈົ້າການ ແລະ ຄວາມສາມາດຂອງທ້ອງຖິ່ນ, ໂຄງການອາຫານທ່ຽງໃນໂຮງຮຽນປັບປຸງການປະຕິບັດການກິນອາຫານທີ່ມີສຸຂະພາບດີ ແລະ ປັບປຸງຜົນສຳເລັດດ້ານການຮຽນຮູ້ຂອງເດັກນ້ອຍຊັ້ນປະຖົມສຶກສາທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ຊົນນະບົດໂດຍສອດຄ່ອງກັບບຸລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025. ນອກຈາກນັ້ນ, ໃນກອງປະຊຸມຍັງໄດ້ຮັບຟັງການລາຍງານຜົນສຳເລັດຕົ້ນຕໍ, ສິ່ງທ້າທາຍ ແລະ ແຜນຈັດຕັ້ງປະຕິບັດໃນຕໍ່ໜ້າຈາກຜູ້ປະສານງານໂຄງການທີ່ຂຶ້ນກັບຫ້ອງການສຶກສາທິການ ແລະ ກິລາຂອງ 5 ເມືອງເປົ້າໝາຍ, ຄວາມຄືບໜ້າກິດຈະກຳ ແລະ ແຜນວຽກ 6 ເດືອນຕໍ່ໜ້າ 2023 ຂອງໂຄງການອາຫານທ່ຽງໃນໂຮງຮຽນທີ່ນອນໃນແຜນງານ 2021-2025.

ໂອກາດດັ່ງກ່າວ, ທ່ານ ພອນພິລົມ ມະນີວັນ ຮັກສາການຫົວໜ້າຂະແໜງສາມັນສຶກສາ ພະແນກສຶກສາທິການ ແລະ ກິລາແຂວງຄຳມ່ວນ ກໍໄດ້ລາຍງານການຕິດຕາມຊຸກຍູ້ໂຄງການອາຫານທ່ຽງໃນໂຮງຮຽນໃນ 5 ເມືອງເປົ້າໝາຍ, ໃນ 5 ເມືອງຂອງແຂວງຄຳມ່ວນ ມີໂຮງຮຽນປະຖົມທັງໝົດ 306 ແຫ່ງ, ໄດ້ຮັບໂຄງການ 176 ແຫ່ງ. ໃນນີ້, ເມືອງບົວລະພາ ມີໂຮງຮຽນປະຖົມທັງໝົດ 101 ແຫ່ງ, ໄດ້ຮັບໂຄງການມີ 77 ແຫ່ງ, ເມືອງໄຊບົວທອງ ມີທັງໝົດ 50 ແຫ່ງ, ໄດ້ຮັບໂຄງການ 30 ແຫ່ງ, ເມືອງມະຫາໄຊ ມີທັງໝົດ 99 ແຫ່ງ, ໄດ້ຮັບໂຄງການມີ 35 ແຫ່ງ, ເມືອງຍົມມະລາດມີທັງໝົດ 56 ແຫ່ງ, ໄດ້ຮັບໂຄງການ 34 ແຫ່ງ, ເມືອງຊົນນະບູລີ ມີທັງໝົດ 91 ແຫ່ງ, ໄດ້ຮັບໂຄງການ 73 ແຫ່ງ. ສຳລັບໂຄງການອາຫານທ່ຽງໃນໂຮງຮຽນມີ 3 ອົງປະກອບຫຼັກ ຄື: ກິດຈະກຳສະໜອງອາຫານໃນໂຮງຮຽນ ຊຶ່ງລວມມີກໍ່ສ້າງໂຄງລ່າງພື້ນຖານ. ໃນນີ້, ໄດ້ສຳເລັດການກໍ່ສ້າງສາງອາຫານ, ເຮືອນຄົວໂຮງກິນເຂົ້າໄດ້ 248 ໂຮງຮຽນ ໃນ 5 ເມືອງເປົ້າໝາຍ, ສຳເລັດເຮັດຮົ້ວສວນຄົວ 246 ໂຮງຮຽນ, ສຳເລັດການປູກຜັກສວນຄົວ 224 ໂຮງຮຽນ, ຊຸມຊົນມີການປະກອບສ່ວນ 236 ໂຮງຮຽນ, ມີຈານຮອງອາຫານ 235 ໂຮງຮຽນ; ກິດຈະກຳສົ່ງເສີມການຮຽນຮູ້ໜັງສືໄດ້ຝຶກອົບຮົມຄູອົບຮົມອາສາສະໝັກ, ຄູ ແລະ ຜູ້ອຳນວຍການໂຮງຮຽນລວມທັງໝົດ 315 ຄົນ, ຍິງ 170 ຄົນ, ສຳເລັດການສ້າງມູມອ່ານ. ໃນນີ້, ລວມເຖິງການປະຖົມນິເທດໃຫ້ແກ່ 45 ບ້ານເປົ້າໝາຍ ແລະ ສຳ ເລັດການສ້າງມູມອ່ານມະຫາໄຊ, ໄຊບົວທອງ ແລະ ຍົມມະລາດ; ສ້າງຖ້ານໃສ່ປຶ້ມໃນ 9 ບ້ານເປົ້າໝາຍຂອງເມືອງບົວລະພາ, ໃນການສ້າງມູມອ່ານມີທັງໝົດ 90 ໂຮງຮຽນເປົ້າໝາຍ, ສຳເລັດໃນການແຈກຢາຍອຸປະກອນໃນການຮຽນຮູ້ ແລະ ການຈັດກິດຈະກຳສົ່ງເສີມການຮູ້ໜັງສືສຳລັບຄ້າຍກຽມຄວາມພ້ອມກ່ອນເຂົ້າ ປ.1 ທັງໝົດມີ 90 ໂຮງຮຽນ ໃນ 4 ເມືອງເປົ້າໝາຍຂອງແຂວງຄຳມ່ວນ, ມີເດັກນ້ອຍຊາຍເຂົ້າຮ່ວມ 513 ນ້ອງ, ເດັກນ້ອຍຍິງ 573 ນ້ອງ, ວຽກດ້ານນ້ຳ, ສຸຂະອະນາໄມ ແລະ ສຸຂາພິບານໄດ້ເຈາະນ້ຳບາດານໃໝ່ສຳເລັດ 30 ໂຮງຮຽນ, ກໍ່ສ້າງລະບົບນ້ຳໂຄງສ້າງເບຕົງເສີມເຫຼັກ 30 ໂຮງຮຽນ, ຕໍ່ນ້ຳຫາວິດຖ່າຍ, ເຮືອນຄົວ, ບ່ອນລ້າງມື ແລະ ສວນຄົວ 90 ໂຮງຮຽນ. **ຂ່າວໂດຍ: ສຸກາຕາ ແສງສຸລິວົງ**

# ໂຮງຮຽນ ປກສ ຊັ້ນສູງ ເລກ III ສະຫວັນນະເຂດ ປະກາດເລື່ອນຊັ້ນ ແລະ ປະດັບຊັ້ນໃຫ້ນັກສຶກສາຮຸ່ນທີ IV ທີ່ສຳເລັດການສຶກສາລະບົບກໍ່ສ້າງ 2 ປີ ປະຈຳປີ 2023

ໂຮງຮຽນ ປກສ ຊັ້ນສູງ ເລກ III ສະຫວັນນະເຂດ ໄດ້ຈັດພິທີປະກາດເລື່ອນຊັ້ນ ແລະ ປະດັບຊັ້ນ ໃຫ້ນັກສຶກສາຮຸ່ນທີ IV ທີ່ສຳເລັດການສຶກສາລະບົບກໍ່ສ້າງ 2 ປີ ປະຈຳປີ 2023 ທີ່ໂຮງຮຽນດັ່ງກ່າວ, ໂດຍການເປັນປະທານຂອງທ່ານ ພັອ ບຸນເລີດ ຄະທຸມພົມ ຮອງຫົວໜ້າກອງບັນຊາການ ປກສ ແຂວງສະຫວັນນະເຂດ, ທ່ານ ພັທ ມິ່ງແກ້ວ ວົງຄຳພາ ຫົວໜ້າອຳນວຍການໂຮງຮຽນ ປກສ ຊັ້ນສູງ ເລກ 3, ມີຄະນະພັກ-ຄະນະບັນຊາ, ຄະນະອຳນວຍການ ແລະ ນັກສຶກສາເຂົ້າຮ່ວມ.

ໃນພິທີ, ທ່ານ ພັທ ນາງ ພອນໄຊ ຈຸນລະມຸນຕີ ຮອງຫົວໜ້າຫ້ອງການເມືອງ ປກສ ແຂວງ ໄດ້ຂຶ້ນຜ່ານຂໍ້ຕົກລົງຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເລກທີ 1826 /ປກສ ລົງວັນທີ 1 ກັນຍາ 2023 ວ່າດ້ວຍການເລື່ອນຊັ້ນໃຫ້ນາຍຕຳຫຼວດທີ່ສຳເລັດການສຶກສາລະດັບຊັ້ນສູງ ຮຸ່ນທີ IV ຈາກໂຮງຮຽນ ປກສ ຊັ້ນສູງ III ກອງບັນຊາການ ປກສ ແຂວງສະຫວັນນະເຂດ ຄື: ເລື່ອນຊັ້ນ ຮອ ຂຶ້ນຊັ້ນ ພັຕ ມີ 03 ສະຫາຍ, ເລື່ອນຊັ້ນ ຮຕ ຂຶ້ນ ຮທ ມີ 5 ສະຫາຍ, ປະດັບຊັ້ນ ມີ 108 ສະຫາຍ, ຍິງ 28 ສະຫາຍ ແລະ ປະກາດ ສັບຊ້ອນນາຍຕຳຫຼວດ ທີ່ສຳເລັດການສຶກສາ ໃຫ້ບັນດາຫ້ອງ, ກົມກອງອ້ອມຂ້າງ ປກສ ແຂວງ ແລະ ບັນດາແຂວງຕ່າງໆ ເພື່ອນຳເອົາຄວາມຮູ້ທີ່ໄດ້ຮຽນມາເຂົ້າມາໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້.



ພ້ອມນີ້, ໃນພິທີຍັງໄດ້ມອບໃບຍ້ອງຍໍຂັ້ນກົມໃຫຍ່ການເມືອງໃຫ້ນາຍ ແລະ ພົນຕຳຫຼວດທີ່ຮຽນຈົບລະດັບຊັ້ນສູງ ຮຸ່ນທີ IV ທີ່ມີຜົນງານດີເດັ່ນໃນການຝຶກຝົນຫຼໍ່ຫຼອມຕະຫຼອດໄລຍະ 2 ປີ ຈຳນວນ 31 ສະຫາຍ, ຍິງ 4 ສະຫາຍ, ໃບຍ້ອງຍໍຂັ້ນກອງບັນຊາການ ປກສ ແຂວງ 87 ສະຫາຍ, ຍິງ 14 ສະຫາຍ ແລະ ໃບກຽດຕິຄຸນໃຫ້ແກ່ນິຕິບຸກຄົນທີ່ມີຜົນງານປະກອບສ່ວນໃນຂະບວນການຕ່າງໆຢູ່ພາຍໃນໂຮງຮຽນ ປກສ ຊັ້ນສູງເລກ III 4 ສະຫາຍ ຍິງ 2 ສະຫາຍ.

ຂະນະດຽວກັນ, ປະທານກອງປະຊຸມຍັງໄດ້ໂອ້ລົມໃຫ້ທິດຊີ້ນຳ, ຊຶ່ງກ່ອນອື່ນ ທ່ານກໍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາສະຫາຍຜູ້ທີ່ໄດ້ຮັບການເລື່ອນຊັ້ນ ແລະ ຍ້ອງຍໍໃນຄັ້ງນີ້ ຈົ່ງເພີ່ມທະວີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ ທີ່ໄດ້ຮັບການມອບໝາຍ ເພາະວ່າການເລື່ອນຊັ້ນໃໝ່ໃນຄັ້ງນີ້ ແມ່ນເປັນການມອບໜ້າທີ່ຂຶ້ນຕື່ມອີກບາດກ້າວໜຶ່ງ ຈົ່ງພ້ອມກັນສືບຕໍ່ກໍ່ສ້າງຕົນເອງ ເພື່ອນຳເອົາຄວາມຮູ້ ຄວາມສາມາດ ທີ່ໄດ້ຮຽນມາມາໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຢູ່ກົມກອງຂອງຕົນທີ່ການຈັດຕັ້ງມອບໝາຍໃຫ້ມີຜົນສຳເລັດ.

**ຂ່າວໂດຍ: ແຂວງສະຫວັນນະເຂດ**

ສຶກສາ, ວິທະຍາສາດ ແລະ ກິລາ
Education, Science and Sports Daily News



## ສະຫວັນນະເຂດ...

ຕໍ່ຈາກໜ້າ 1 ......

ການແຂ່ງຂັນກິລາດອກປີກໄກ່ຄັ້ງນີ້ ແມ່ນເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນສອງວັນສຳຄັນຂອງຊາດທີ່ຈະມາເຖິງໃນຕໍ່ໜ້ານີ້ ເປັນຕົ້ນແມ່ນວັນສ້າງຕັ້ງກິລາ-ກາຍະກຳແຫ່ງຊາດ, ວັນຄູແຫ່ງຊາດ ແລະ ວັນສຳຄັນຕ່າງໆທັງເປັນການສ້າງບັນຍາກາດ ແລະ ຮັດແໜ້ນຄວາມສາມັກຄີ ກັບທຸກພາກສ່ວນ ເປັນການສ້າງສາຍສຳພັນໄມຕີຈິດລະຫວ່າງແຂວງຕໍ່ແຂວງ ກໍຄືແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ ແລະ ຍັງເປັນການຊອກຫານັກກິລາຜູ້ທີ່ມີທັກສະສີມື ແລະ ພອນສະຫວັນ ໃນການຫຼິ້ນກິລາປະເພດນີ້ ກຽມເປັນຕົວແທນຂອງແຂວງເຂົ້າຮ່ວມແຂ່ງຂັນລະດັບຊາດ ແລະ ຕິດທີມຊາດ ກຽມເຂົ້າຮ່ວມແຂ່ງຂັນລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ໃນຕໍ່ໜ້າ.

ການແຂ່ງຂັນລາຍການດັ່ງກ່າວ ມີນັກກິລາເຂົ້າຮ່ວມທັງໝົດ 17 ທີມ ຜົນການແຂ່ງຂັນປະກົດວ່າ: ສາຍ ກ ຊະນະເລີດ ທ່ານ ຄຳພຸດ+ທ່ານ ດິດ ໄດ້ຮັບເງິນສົດ 2 ລ້ານກີບ ພ້ອມຂັນ 2 ໜ່ວຍ ແລະ ຮອງຊະນະເລີດ ທ່ານ ກວ້າງ+ທ່ານ ວີ ໄດ້ຮັບເງິນສົດ 1,5 ລ້ານກີບ ພ້ອມຂັນ 2 ໜ່ວຍ; ສາຍ ຂ ຊະນະເລີດ ທ່ານ ຕອກ+ທ່ານ ສິງ ໄດ້ຮັບເງິນສົດ 2 ລ້ານກີບ ພ້ອມຂັນ 2 ໜ່ວຍ ແລະ ຮອງຊະນະເລີດ ທ່ານ ນາງ ພອນ +ທ່ານ ນ້ອຍ ໄດ້ຮັບເງິນສົດ 1,5 ລ້ານກີບ ພ້ອມຂັນ 2 ໜ່ວຍ; ປະເພດທີມຍິງ ຊະນະເລີດ ທ່ານ ນາງ ຮ່ອງ+ ທ່ານ ນາງ ເມ ໄດ້ຮັບເງິນສົດ 2 ລ້ານກີບ ພ້ອມຂັນ 2 ໜ່ວຍ ແລະ ຮອງຊະນະເລີດ ທ່ານ ນາງ ຫຼຸຍ + ນາງ ປິ່ງ ໄດ້ຮັບເງິນສົດ 1,5 ລ້ານກີບ ພ້ອມຂັນ 2 ໜ່ວຍ.

**ຂ່າວ-ພາບ: ສະຫວັນນະເຂດ**




## ຄຳມ່ວນ...

ຕໍ່ຈາກໜ້າ 1 ......

... ເປັນເຈົ້າພາບຈັດງານແຂ່ງຂັນເຂດທີ 2, ກອງບັນຊາການທະຫານແຂວງຄຳມ່ວນ ເປັນເຈົ້າພາບຈັດງານແຂ່ງຂັນເຂດທີ 3, ກອງບັນຊາການທະຫານແຂວງເຊກອງ ເປັນເຈົ້າພາບຈັດງານແຂ່ງຂັນເຂດທີ 4 ແລະ ກອງພົນທະຫານຮາບທີ 1 ເປັນເຈົ້າພາບຈັດງານແຂ່ງຂັນເຂດທີ 5.

ການຈັດງານແຂ່ງຂັນຮ້ອງເພງ-ຂັບລຳສຽງດີ ທົ່ວກອງທັບໃນຄັ້ງນີ້ ເພື່ອແນໃສ່ປຸກລະດົມຊຸກຍູ້ແນວຄິດຈິດໃຈ, ກໍຄືມານະຈິດປະຕິວັດຂອງພະນັກງານນັກຮົບໃນທົ່ວກອງທັບ ແລະ ປະຊາຊົນລາວບັນດາເຜົ່າໃຫ້ມີຄວາມເບີກບານມ່ວນຊື່ນ, ເອກອ້າງທະນົງໃຈຕໍ່ຜົນງານໄຊຊະນະອັນໃຫຍ່ຫຼວງໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດທັງເປັນການອະນຸລັກ ແລະ ສົ່ງເສີມສິລະປະວັດທະນະທຳອັນດີງາມຂອງຊາດ, ຊອກໃຫ້ເຫັນພະນັກງານນັກຮົບຜູ້ທີ່ມີພອນສະຫວັນ, ມີນ້ຳສຽງທີ່ດີໃນການຮ້ອງເພງ-ຂັບລຳຢູ່ໃນກົມກອງກໍຄືໃນກອງທັບ ພ້ອມທັງຖືເອົາໂອກາດນີ້ເປັນການສຶກສາອົບຮົມການເມືອງນຳພາແນວຄິດໃຫ້ພະນັກງານນັກຮົບຮັບຮູ້ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແນໃສ່ປັບປຸງກໍ່ສ້າງກອງທັບໃຫ້ກາຍເປັນກອງທັບປະຕິວັດ, ມີແບບແຜນທັນສະໄໝເປັນກ້າວໆ.




ການແຂ່ງຂັນດັ່ງກ່າວ ແມ່ນມີບັນດານັກຮ້ອງ-ນັກຂັບລຳສຽງດີຈາກ 11 ກົມກອງເຂົ້າຮ່ວມຄື: ກົມໃຫຍ່ພະລາທິການກອງທັບ, ກອງພົນໃຫຍ່ 605, ວິທະຍາຄານນາຍທະຫານບົກກົມມະດຳ, ກອງພົນໃຫຍ່ 11, ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ, ວິທະຍາຄານການແພດກອງທັບ, ກົມ 213, ກອງບັນຊາການທະຫານອາກາດ, ກອງບັນຊາການທະຫານແຂວງວຽງຈັນ, ກົມໃຫຍ່ການເມືອງກອງທັບ ແລະ ກອງບັນຊາການທະຫານແຂວງຄຳມ່ວນ ຊຶ່ງຈະມີການແຂ່ງຂັນທັງໝົດ 40 ລາຍການ ໂດຍໄດ້ແບ່ງອອກເປັນ 2 ໄລຍະການແຂ່ງຂັນ ຄື : ໄລຍະທີ 1 ຈະໄດ້ແຂ່ງຂັນ 19 ລາຍການ ແລະ ໄລຍະທີ 2 ແມ່ນຈະໄດ້ແຂ່ງຂັນ 21 ລາຍການ.

**ພາບ-ຂ່າວ: khammouane News**

# ສກມ ສຸຂຸມາ-ສກຂ ຈຳປາສັກ ແຂ່ງຂັນກິລາເຕະບານມິດຕະພາບ



ຫ້ອງການສຶກສາທິການ ແລະ ກິລາເມືອງ ຫຼື ສກມ ສຸຂຸມາ ຮ່ວມກັບພະແນກສຶກສາທິການ ແລະ ກິລາແຂວງ (ສກຂ) ຈຳປາສັກ ຈັດກິດຈະກຳແຂ່ງຂັນກິລາເຕະບານມິດຕະພາບ ເພື່ອຮັດແໜ້ນຜູກພັນຄວາມສະໜານສາມັກຄີໃຫ້ເລິກເຊິ່ງ ລະຫວ່າງຜູ້ບໍລິຫານການສຶກສາຂັ້ນແຂວງ ແລະ ຜູ້ບໍລິຫານການສຶກສາຂັ້ນເມືອງ ໄດ້ເປັນອັນໜຶ່ງອັນດຽວກັນ ແລະ ເປັນການຢື້ຢາມຖາມຂ່າວ ແລກປ່ຽນຖອດຖອນບົດຮຽນຮ່ວມກັນ ເພື່ອສ້າງໄດ້ບັນຍາກາດອັນສະໜິດສະໜົມເບີກບານມ່ວນຊື່ນ.

ກິດຈະກຳແຂ່ງຂັນກິລາເຕະບານມິດຕະພາບໃນຄັ້ງນີ້ ໄດ້ມີຂຶ້ນໃນວັນທີ 8 ກັນຍາ 2023 ທີ່ເດີ່ນກິລາ ກອງບັນຊາການປ້ອງກັນຄວາມສະຫງົບສຸກເມືອງສຸຂຸມາ ໂດຍມີທ່ານ ບົວທອງ ສຸວັນນະສານ ຄະນະປະຈຳພັກແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ ແລະ ທ່ານ ຄຳບອນ ສີຣັກສາ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງສຸຂຸມາ ພ້ອມດ້ວຍພະນັກງານ, ຄູອາຈານ ແລະ ພາກສ່ວນກ່ຽວຂ້ອງ 2 ຝ່າຍເຂົ້າຮ່ວມ.

ການແຂ່ງຂັນກິລາເຕະບານມິດຕະພາບຄັ້ງນີ້ ທາງຫ້ອງການສຶກສາທິການ ແລະ ກິລາເມືອງສຸຂຸມາ ໄດ້ເຊື້ອເຊີນພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ ເພື່ອເຂົ້າມາຮ່ວມແຂ່ງຂັນກິລາເຕະບານມິດຕະພາບ ເພື່ອເປັນການຮັດແໜ້ນຄວາມສາມັກຄີ ລະຫວ່າງຜູ້ບໍລິຫານການສຶກສາ ແລະ ກິລາຂັ້ນແຂວງ ແລະ ຜູ້ບໍລິຫານການສຶກສາ ແລະ ກິລາຂັ້ນເມືອງ ໄດ້ຖືໂອກາດຖອດຖອນ ແລະ ແລກປ່ຽນບົດຮຽນຮ່ວມກັນ ໃນດ້ານການກິລາ ໂດຍສະເພາະທັງເປັນສ້າງຂະບວນການຕ້ອນຮັບວັນຄູແຫ່ງຊາດ ຄົບຮອບ 29 ປີ ທີ່ຈະໝູນວຽນມາບັນຈົບຄົບຮອບໃນໄວໆນີ້, ວັນສາກົນແຫ່ງການຮຽນຮູ້ໜັງສື ຄົບຮອບ 58 ປີ, ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 61 ປີ ໃຫ້ເຕັມໄປດ້ວຍຄວາມໝາຍຄວາມສຳຄັນຢ່າງເລິກເຊິ່ງ.

ຜ່ານການແຂ່ງຂັນຜົນປະກົດວ່າ ເປັນຝ່າຍທີມພະແນກສຶກສາທິການ ແລະ ກິລາແຂວງ ສາມາດເອົາຊະນະ ທີມຫ້ອງການສຶກສາທິການ ແລະ ກິລາເມືອງສຸຂຸມາ ໄປໄດ້ 5-3 ປະຕູ.

**ຂ່າວໂດຍ: ຂາວພອນ ມ້າວຄຳຊື່ວ**

# ເມືອງຜາໄຊ ແຂວງຊຽງຂວາງ ຈັດແຂ່ງຂັນກິລາຂີ່ມ້າ

ໜ່ວຍສະມາຄົມກິລາວັນນະຄະດີພື້ນເມືອງປະຈຳເມືອງຜາໄຊ ແຂວງຊຽງຂວາງ ໄດ້ຈັດການແຂ່ງຂັນກິລາຂີ່ມ້າ ໃນຕອນເຊົ້າວັນທີ 12 ກັນຍາ 2023 ທີ່ເດີ່ນກິລາພື້ນເມືອງຂອງເມືອງດັ່ງກ່າວ ໂດຍມີ ທ່ານ ຄຳສະຫວາດ ສະຕິທອງ ຄະນະປະຈຳພັກເມືອງ, ປະທານແນວລາວສ້າງຊາດເມືອງ, ທ່ານ ຫວັງຢັ່ງມົວ ຮອງປະທານສະມາຄົມກິລາວັນນະຄະດີພື້ນເມືອງ ແຂວງຊຽງຂວາງ ພ້ອມດ້ວຍບັນດາຄະນະກຳມະການສະມາຄົມກິລາວັນນະຄະດີພື້ນເມືອງ, ນັກກິລາຂີ່ມ້າສະໝັກຫຼິ້ນ ແລະ ມວນຊົນເຂົ້າຮ່ວມຢ່າງເປັນຂະບວນຟົດຟື້ນ.

ກິດຈະກຳການແຂ່ງຂັນກິລາຂີ່ມ້າສະໝັກຫຼິ້ນຄັ້ງນີ້ ໄດ້ຈັດແບ່ງເປັນ 5 ຄູ່ ແຂ່ງຂັນເທື່ອລະຄູ່ ແຕ່ລະຄູ່ແລ່ນໄລຍະທາງ 200 ແມັດ, ຫ້າຮອບຕາມກົດກະຕິກາຂອງການແຂ່ງຂັນ ຊຶ່ງການແຂ່ງຂັນແມ່ນກຳນົດເອົາແລ່ນໄວ ແລະ ແລ່ນງາມ. ຜ່ານການແຂ່ງຂັນຜົນປະກົດວ່າ: ຄູ່ທີ 1 ແລ່ນໄວ ພ້ອມແລ່ນງາມໄດ້ແກ່ມ້າຂອງທ່ານ ເອກ ບ້ານນາໂຄ້, ຄູ່ທີ 2 ໄດ້ແກ່ມ້າຂອງທ່ານ ຄຳຮູ້, ຄູ່ທີ 3 ໄດ້ແກ່ມ້າຂອງທ່ານ ແສງເພັດ ໂພສະຫວັນ, ຄູ່ທີ 4 ໄດ້ແກ່ມ້າຂອງທ່ານ ດິ້ນ ລາດຄອຍ ແລະ ຄູ່ທີ 5 ໄດ້ແກ່ມ້າຂອງທ່ານ ເອກ ບ້ານນາໂຄ້ ໂດຍຈຸດປະສົງຂອງການຈັດງານໃນຄັ້ງນີ້ ກໍເພື່ອເປັນການສະເຫຼີມສະຫຼອງວັນບຸນຫໍ່ເຂົ້າປະດັບດິນປະຈຳປີ 2023 ຂອງຊາວລາວເຮົາ ໂດຍສະເພາະຊາວເມືອງຜາໄຊ ທີ່ເຄີຍປະຕິບັດກັນມາ ແລະ ເປັນການສົ່ງເສີມການລ້ຽງມ້າ ກໍຄືສັດອື່ນໆໃຫ້ຫຼາຍຂຶ້ນເລື້ອຍໆ.

ນອກຈາກນັ້ນ ຍັງໄດ້ມີການແຂ່ງຂັນກິລາງົວຊົນງົວຕື່ມອີກຫຼາຍຄູ່ ເພື່ອເຮັດໃຫ້ມີບັນຍາກາດຟົດຟື້ນ ແລະ ເປັນການສ້າງສັນຄວາມສາມັກຄີຮັກແພງຂອງພໍ່ແມ່ປະຊາຊົນບັນດາເຜົ່າໃນທ້ອງຖິ່ນໃຫ້ມີຄວາມແໜ້ນແຟ້ນຂຶ້ນເລື້ອຍໆ.






# ພົບຢາບ້າ 21 ເປົາໃນລົດກະບະທີ່ເກີດອຸບັດຕິເຫດຢູ່ເຂດ 3 ລ່ຽມຄໍາ






ລົດກະບະວີໂກ້ ສີປອນເງິນ ແລ່ນດ້ວຍຄວາມໄວມຸ່ງໜ້າໄປທາງຕົ້ນເຜີ້ງ ແຂວງບໍ່ແກ້ວ ເກີດອຸບັດຕິເຫດຕຳທ້າຍລົດບັນທຸກລົດດຸດ, ລປພ ເຂດເສດຖະກິດພິເສດ 3 ລ່ຽມຄໍາ ອອກໄປເບິ່ງເຫດການ ເຫັນຄົນຂັບລົດກະບະແລ່ນໜີ ຈຶ່ງແຈ້ງເຈົ້າໜ້າທີ່ເຂົ້າກວດກາເຫດ ພົບຢາບ້າໃນລົດກະບະຈຳນວນ 21 ເປົາ.

ເຈົ້າໜ້າທີ່ ປກສ ເຂດເສດຖະກິດພິເສດ 3 ລ່ຽມຄໍາ ໃຫ້ຮູ້ວ່າ: ໃນເວລາປະມານ 03:45 ໂມງຂອງວັນທີ 16 ສິງຫາ ຜ່ານມາ ໄດ້ມີເຫດການລົດກະບະວີໂກ້ ສີປອນເງິນ ໝາຍເລກທະບຽນ ບໍ່ແກ້ວ ກກ 4394 ແລ່ນມາແຕ່ທາງບ້ານມ້ວງຄໍາ ມຸ່ງໜ້າໄປຕົ້ນເຜີ້ງ ແຂວງບໍ່ແກ້ວ ມາຮອດປະຕູ 2 ທາງເຂົ້າຂດເສດຖະກິດພິເສດ 3 ລ່ຽມຄໍາ ໄດ້ມີລົດບັນທຸກລົດດຸດ ກຳລັງຈະເຂົ້າໄປເຂດກໍ່ສ້າງຢູ່ເຂດເສດຖະກິດພິເສດ 3 ລ່ຽມຄໍາ ແຕ່ຈະໂຄ້ງເຂົ້າປະຕູບໍ່ໄດ້ຈຶ່ງຖອຍຫຼັງກັບຄືນ ເຮັດໃຫ້ລົດກະບະວີໂກ້ແລ່ນມາດ້ວຍຄວາມໄວສູງ ຕຳເອົາທ້າຍລົດ; ເວລານັ້ນ ລປພ ເຂດເສດຖະກິດພິເສດ ໄດ້ອອກໄປເບິ່ງເຫດການ ແລ້ວໄດ້ເຫັນຄົນຂັບລົດກະບະຄັນດັ່ງກ່າວແລ່ນໜີ ແລ້ວມີຄົນມາຮັບເອົາໄປ, ລປພ ຈຶ່ງແຈ້ງຕໍ່ເຈົ້າໜ້າທີ່ ປກສ ເຂດເສດຖະກິດພິເສດ 3 ລ່ຽມຄໍາ.





ເຈົ້າໜ້າທີ່ເຂົ້າກວດກາຈຸດເກີດເຫດ ພົບເຫັນຢາເສບຕິດປະເພດຢາບ້າ ຈຳນວນ 21 ເປົາ ເທົ່າກັບ 3.150 ມັດ ມີທັງໝົດ 6.300.000 ເມັດ ນໍ້າໜັກ 756 ກິໂລກຣາມ ໃນລົດກະບະຄັນດັ່ງກ່າວ ຈຶ່ງໄດ້ກັກລົດ ແລະ ຍຶດຢາເສບຕິດຈຳນວນນີ້ໄວ້ເພື່ອສືບຕໍ່ສືບສວນ-ສອບສວນ ຕາມຈັບເປົ້າໝາຍທີ່ກ່ຽວຂ້ອງມາດຳເນີນຄະດີ.

**ຄັດຈາກ: ນສພ ປ້ອງກັນຄວາມສະຫງົບ ນວ**




# ຊຸບຍອດໝາກຊູ ໃສ່ຂີງດິບ ຫອມໆ

ຍອດໝາກຊູ ເປັນພືດຜັກຊະນິດໜຶ່ງ ທີ່ສາມາດເຮັດກິນໄດ້ຫຼາຍເມນູກັບຜັກຊະນິດອື່ນໆ ເຊັ່ນ: ຂົ້ວ, ເອາະ, ແກງ, ລວກ... ຊຶ່ງເປັນພືດຜັກທີ່ປູກຢູ່ພາຍໃນປະເທດລາວເຮົາເອງອີກ ມີຫຼາຍແຂວງທີ່ປູກໄດ້ ໂດຍສະເພາະແມ່ນແຂວງຈຳປາສັກຈະປູກຫຼາຍ ແລະ ກາຍເປັນສິນຄ້າສົ່ງອອກ, ທີ່ສຳຄັນ ລາຄາບໍ່ແພງ ປັດຈຸບັນກິໂລລະ 10.000 ກີບ. ດັ່ງນັ້ນ, ມື້ນີ້ ຄໍລຳສາລະໜ້າຮູ້ ຈະພາທ່ານມາເຮັດຊຸບຍອດໝາກຊູກິນ.



**+ ວັດຖຸດິບ:** ຍອດໝາກຊູ, ຂີງ, ຫົວຜັກທຽມ, ໝາກງາ, ເກືອ, ແປ້ງນົວ, ຫອມປ້ອມ, ຫອມບົ່ວ, ນໍ້າປາ (ຖ້າທ່ານໃດບໍ່ກິນປາແດກ ສາມາດໃສ່ນໍ້າປາແດກສຸກໄດ້).

**+ ຂັ້ນຕອນເຮັດ:** ເອົາຍອດໝາກຊູມາສ້ອມເອົາແຕ່ຍອດອ່ອນ ແລະ ໃບອ່ອນ ແລ້ວລ້າງນໍ້າໃຫ້ສະອາດ. ຈາກນັ້ນ ກໍມາຂົ້ວໝາກງາຂາວ ຕຳໃຫ້ລະອຽດໄວ້. ຫຼັງຈາກນັ້ນ, ກໍມາຄ້າງໝໍ້ລວກຍອດໝາກຊູ ໂດຍເປີດໄຟປານກາງ ໃສ່ນໍ້າສະອາດ ປະມານເຄິ່ງລິດ ເມື່ອໝໍ້ຟົດແລ້ວໃຫ້ໃສ່ເກືອລົງໄປປະມານ 1 ບ່ວງກາເຟ. ຈາກນັ້ນ, ກໍເອົາຍອດໝາກຊູລົງໄປລວກໂດຍບໍ່ຕ້ອງປົກຝາໝໍ້ ເພາະຈະເຮັດໃຫ້ຜັກເປັນສີເສົ້າ ຫຼື ແຫຼ້ ຕົ້ມໃຫ້ຜັກສຸກ ໂດຍບີບເບິ່ງຈະອ່ອນພ້ອມຕັກໃສ່ໝໍ້ ຫຼື ຊາມ ທີ່ຈະຄົນເຮັດຊຸບປະໄວ້ໃຫ້ເຢັນ.

**+ ວິທີເຮັດ:** ເຮັດສູດນີ້ ແມ່ນຈະບໍ່ຈີ່ຫຍັງຫຼາຍ ເປັນຊຸບແບບວິທີໜຶ່ງທີ່ງ່າຍດີ. ນອກຈາກຈະຈີ່ແຕ່ໝາກເຜັດແຫ້ງ ຫຼື ໝາກເຜັດດິບ ແຕ່ຜູ້ຂຽນຄໍລຳຈະໃສ່ໝາກເຜັດແຫ້ງເອົາ ເພາະຈະຫອມກວ່າ. ຈາກນັ້ນ, ມາຕຳໝາກເຜັດແຫ້ງທີ່ຈີ່ສຸກ ພ້ອມຫົວຜັກທຽມດິບ 3 ກີບ ແລະ ຂີງດິບມາຊອຍໃສ່ຕື່ມເກືອ, ແປ້ງນົວໃສ່ຄົກແລ້ວຕຳໃຫ້ລະອຽດເຂົ້າກັນດີ. ຈາກນັ້ນ ກໍຕັກໃສ່ຜັກທີ່ລວກໄວ້ນັ້ນ ຕໍ່ມາເອົາໝາກງາທີ່ຕຳໄວ້ໂດຍລົງໄປ ຊາວໃຫ້ເຂົ້າກັນ ຊີມລົດຊາດ ພ້ອມຢອດນໍ້າປາ ຫຼື ປາແດກສຸກລົງໄປ ຊີມລົດຊາດອີກຄັ້ງ ຖ້າພໍດີແລ້ວໃຫ້ຊອຍຫອມປ້ອມ ແລະ ຫອມບົ່ວລົງໄປເທົ່ານີ້ ທ່ານກໍຈະໄດ້ຊຸບຍອດໝາກຊູກັນແລ້ວ.



**ຂ່າວໂດຍ: ນົກແຕນແອນ**




# ຈີນ ເຜີຍອັນດັບບໍລິສັດເອກະຊົນຊັ້ນນໍາ 500 ແຫ່ງ ປະຈໍາປີ 2023 ເຈດີດອດຄອມ ຍືນເບີ 1

ສຳນັກຂ່າວຕ່າງປະເທດລາຍງານເມື່ອວັນທີ 14 ກັນຍາ 2023 ວ່າ: ສະຫະພັນອຸດສາຫະກຳ ແລະ ການຄ້າແຫ່ງ ສປ ຈີນ ເປີດເຜີຍອັນດັບບໍລິສັດເອກະຊົນລາຍໃຫຍ່ທີ່ສຸດຂອງຈີນ 500 ແຫ່ງ ປະຈຳປີ 2023 ໂດຍ 3 ອັນດັບທຳອິດ ນຳໂດຍເຈດີດອດຄອມ (JD.Com) ມາເປັນອັນດັບ 1 ຕາມມາແມ່ນ ອາລີບາບາ (Alibaba) ແລະ ເຫິງລີ ກຣຸບ (Hengli Group).

ລາຍງານການວິໄຈ ແລະ ວິເຄາະ ຊຶ່ງເຜີຍແຜ່ພ້ອມການຈັດອັນດັບບໍລິສັດເອກະຊົນລາຍໃຫຍ່ທີ່ສຸດຂອງຈີນ 500 ແຫ່ງ ປະຈຳປີ 2023 ລະບຸວ່າ: ເກນຂັ້ນຕໍ່າດ້ອຍລາຍໄດ້ສຳລັບບໍລິສັດເອກະຊົນຈີນ 500 ອັນດັບ ໃນປີ 2022 ຢູ່ທີ່ 2,75 ໝື່ນລ້ານຢວນ ຊຶ່ງເພີ່ມຂຶ້ນຈາກປີກ່ອນໜ້ານີ້ 1,21 ພັນລ້ານຢວນ ໂດຍບໍລິສັດ 95 ຈາກ 500 ແຫ່ງ ມີລາຍໄດ້ໃນປີກ່ອນເກີນ 1 ແສນລ້ານຢວນ.

ສຳນັກຂ່າວຊິນຫົວລາຍງານວ່າ ການຈັດອັນດັບດັ່ງກ່າວ ເປັນການສຳຫຼວດບໍລິສັດເອກະຊົນລາຍໃຫຍ່ຂອງຈີນ ຄັ້ງທີ 25 ທີ່ຈັດທຳໂດຍສະຫະພັນອຸດສາຫະກຳ ແລະ ການຄ້າແຫ່ງ ສປ ຈີນ ຊຶ່ງມີບໍລິສັດເຂົ້າຮ່ວມການສຳຫຼວດ 8.961 ແຫ່ງ ໂດຍແຕ່ລະຄົນມີລາຍໄດ້ຕໍ່ປີຫຼາຍກວ່າ 500 ລ້ານຢວນ.



ສຳລັບບໍລິສັດເອກະຊົນລາຍໃຫຍ່ທີ່ສຸດຂອງຈີນ 10 ອັນດັບທຳອິດ ປະຈຳປີ 2023 ປະກອບມີ: 1. ເຈດີດອດຄອມ (JD. Com), 2. ອາລີບາບາ (Alibaba), 3. ເຫິງລີ ກຣຸບ (Hengli Group), 4. Amer International Group Limited, 5. Zhejiang Rongsheng Holding Group Co., Ltd, 6. Tencent Holdings Limited, 7. Shandong Weiqiao Pioneering Group Company Limited 8. China Vanje Co., Ltd. 9. Legene Holding Corporation, 10. BYD Company Limited.

# ສື່ສະຫະລັດ ຍົກໃຫ້ສະວິດເຊີແລນ ເປັນປະເທດທີ່ດີທີ່ສຸດໃນໂລກ

ສຳນັກຂ່າວຕ່າງປະເທດລາຍງານເມື່ອວັນທີ 14 ກັນຍາ 2023 ວ່າ: ສຳນັກຂ່າວອາເມຣິກາ ຈັດອັນດັບປະເທດທີ່ດີທີ່ສຸດໃນໂລກ ຕາມຂໍ້ມູນການສຳຫຼວດຈາກປະຊາຊົນກວ່າ 30 ປະເທດທົ່ວໂລກ ໂດຍມີສະວິດເຊີແລນໄດ້ອັນດັບ 1 ຂະນະທີ່ຝ່າຍອາຊີມີຍີ່ປຸ່ນໄດ້ຕຳແໜ່ງສູງສຸດຢູ່ໃນອັນດັບທີ 6.

ເມື່ອອາທິດທີ່ຜ່ານມາ ສຳນັກຂ່າວອາເມຣິກາ "ຢູເອັດນິວ" ເຜີຍແຜ່ຜົນການຈັດອັນດັບປະຈຳປີໃນຫົວຂໍ້ປະເທດທີ່ດີທີ່ສຸດໃນໂລກ ຊຶ່ງປະກົດວ່າ ໃນປີ 2023 ນີ້ ສະວິດເຊີແລນ ໄດ້ເປັນປະເທດທີ່ດີທີ່ສຸດໃນໂລກ ຂະນະທີ່ປະເທດເຈົ້າພາບໄດ້ອັນດັບທີ 5 ໂດຍມີຍີ່ປຸ່ນ ຕາມມາໃນອັນດັບທີ 6 ແລະ ເປັນປະເທດອາຊີທີ່ໄດ້ອັນດັບສູງສຸດໃນລາຍການນີ້.



ຜົນການຈັດອັນດັບນີ້ ໄດ້ມາຈາກຂໍ້ມູນທີ່ຄັດແຍກການສຳຫຼວດປະຊາຊົນ 17.000 ຄົນ ຈາກ 36 ປະເທດທົ່ວໂລກ ໂດຍຕ້ອງຕອບຄຳຖາມເພື່ອປະເມີນລະດັບຕາມຄວາມຄິດຂອງຜູ້ເຮັດແບບສອບຖາມໃນຫົວຂໍ້ຕ່າງໆ ເຊັ່ນ: ຄຸນນະພາບຊີວິດ, ໂອກາດການປະກອບທຸລະກິດ, ອັດຕາການເກັບພາສີ, ຄຸນນະພາບຂອງບໍລິການທາງການແພດ, ຄວາມໂປ່ງໃສໃນການບໍລິຫານງານຂອງລັດຖະບານ, ສິດທິແມ່ຍິງ, ເສລີພາບຂອງສື່ມວນຊົນ, ຄວາມເປັນປະຊາທິປະໄຕ ເປັນຕົ້ນ. ສຳລັບ 10 ອັນດັບທຳອິດຂອງປະເທດທີ່ດີທີ່ສຸດໃນໂລກ 2023 ຕາມຜົນສຳຫຼວດຄວາມຄິດເຫັນຂອງສຳນັກຂ່າວຢູເອັດນິວ ໄດ້ແກ່ ສະວິດເຊີແລນ, ການາດາ, ສະວີເດັນ, ອົດສະຕຣາລີ, ສະຫະລັດອາເມຣິກາ, ຍີ່ປຸ່ນ, ເຢຍລະມັນ, ນິວຊີແລນ, ອັງກິດ ແລະ ໂຮນລັງ.

ສຳລັບປະເທດອື່ນໆໃນອາຊີທີ່ຕິດອັນດັບຄັ້ງນີ້ ເຊັ່ນ: ສິງກະໂປ (16), ສະຫະລັດອາຣັບເອມິເຣດ (19), ສປ ຈີນ (20), ສ. ເກົາຫຼີ (21), ກາຕາ (26), ໄທ (29) ແລະ ອິນເດຍ (30).

# ຫວຽດນາມ ເລັ່ງເພີ່ມອັດຕາສ່ວນ "ຈ່າຍເງິນໄຮ້ເງິນສົດ" ໃຫ້ໄດ້ 50% ພາຍໃນປີ 2025

ສຳນັກຂ່າວຕ່າງປະເທດລາຍງານເມື່ອວັນທີ 14 ກັນຍາ 2023 ວ່າ: ກະຊວງອຸດສາຫະກຳ ແລະ ການຄ້າຂອງຫວຽດນາມ ກຳນົດເປົ້າໝາຍຂ້າງຕົ້ນພາຍໃຕ້ຄວາມພະຍາຍາມດຳເນີນຕາມແຜນການລະດັບຊາດວ່າດ້ວຍການພັດທະນາອີຄອມເມີດ ພ້ອມທັງກຳນົດເປົ້າໝາຍເພີ່ມອັດຕາສ່ວນການຊຳລະເງິນທີ່ດຳເນີນຜ່ານຜູ້ໃຫ້ບໍລິການຕົວກາງການຊຳລະເງິນເປັນ 80% ຂອງການຊຳລະເງິນແບບໄຮ້ເງິນສົດ ໃນກິດຈະກຳອີຄອມເມີດພາຍໃນປີ 2025.



ສູນຂໍ້ມູນ ແລະ ເຕັກໂນໂລຢີດິຈິຕອນ ສັງກັດໜ່ວຍງານອີຄອມເມີດ ແລະ ເສດຖະກິດດິຈິຕອນ ສັງກັດກະຊວງອຸດສາຫະກຳ ແລະ ການຄ້າຫວຽດນາມ ຈະເປີດຕົວລະບົບເຝົ້າຮັບຮອງຄວາມປອດໄພ ຂອງການດຳເນີນທຸລະກຳໃນກິດຈະກຳອີຄອມເມີດ ໂດຍມຸ່ງຄຸ້ມຄອງສິດທິຜູ້ບໍລິໂພກໃນສະພາບແວດລ້ອມດິຈິຕອນ ແລະ ດູແລຜົນປະໂຫຍດຂອງທຸກຝ່າຍ ທີ່ກ່ຽວຂ້ອງກັບການທຳທຸລະກຳອອນລາຍ. ປັດຈຸບັນ, ການຊຳລະເງິນແບບໄຮ້ເງິນສົດເພີ່ມສູງຂຶ້ນໃນຫວຽດນາມ ທັງໃນແງ່ຈຳນວນ ແລະ ມູນຄ່າ ໂດຍເພີ່ມຂຶ້ນ 52,35% ໃນໄລຍະ 5 ເດືອນທຳອິດຂອງປີນີ້ ສ່ວນການຊຳລະເງິນຜ່ານທາງອອນລາຍຂອງຫວຽດນາມ ຢູ່ໃນແນວໂນ້ມຂາຂຶ້ນທີ່ 75,54% ໃນແງ່ຈຳນວນ ແລະ 1,77% ໃນແງ່ມູນຄ່າ.

ຂະນະທີ່ການຊຳລະເງິນຜ່ານໂທລະສັບມືຖືເພີ່ມຂຶ້ນ 64,26% ໃນແງ່ຈຳນວນ ແລະ 7,65% ໃນແງ່ມູນຄ່າ ສ່ວນການຊຳລະເງິນຜ່ານຄິວອາໂຄດ ເພີ່ມຂຶ້ນ 151,41% ໃນແງ່ຈຳນວນ ແລະ 30,41% ໃນແງ່ມູນຄ່າ ດ້ານການຊຳລະເງິນຜ່ານຈຸດຊຳລະເງິນໜ້າຮ້ານເພີ່ມຂຶ້ນ 30,35% ໃນແງ່ຈຳນວນ ແລະ 27,27% ໃນແງ່ມູນຄ່າ.